


# ວັນໂລກອາວະສານ

**ການຫລົ້ມສະຫລາຍຂອງເຢຣູຊາເລັມແລະຄວາມໝາຍຂອງມັນ**

**ພະຄຣິດໄດ້ຮູ້ສຶກແນວໃດກ່ຽວກັບເຢຣູຊາເລັມ?**

> "ເມື່ອພຣະອົງສະເດັດມາໃກ້ແລະເຫັນກຸງແລ້ວ ກໍຊົງ<u>ພຣະກັນແສງເພາະສົງສານກຸງນັ້ນ</u> ໂດຍຊົງກ່າວວ່າ, "ໂອ ເຢຣູຊາເລັມ, ໃນວັນນີ້ ຖ້າເຈົ້າເອງໄດ້ຮູ້ເຖິງການທີ່ກ່ຽວຂ້ອງກັບສັນຕິສຸກ ແຕ່ວ່າບັດນີ້ສິ່ງເຫລົ່ານັ້ນໄດ້ບັງລັບໄວ້ຈາກຕາເຈົ້າແລ້ວ" (ລູກາ 19:41, 42)

**ພະອົງທຳນາຍການຫລົ້ມສະຫລາຍຂອງເຢຣູຊາເລັມວ່າແນວໃດ?**

> "ດ້ວຍວ່າເວລາຈະມາເຖິງເຈົ້າ ເມື່ອສັດຕຣູຂອງເຈົ້າຈະຂຸດຄູອ້ອມເຈົ້າແລະຈະຕັນເຈົ້າໄວ້ທຸກດ້ານ ແລ້ວເຂົາຈະທຳລາຍເຈົ້າກັບບັນດາລູກທັງຫລາຍທີ່ຢູ່ນຳເຈົ້າໃຫ້ລົງພຽງດິນ ແລະເຂົາຈະປະໃຫ້ກ້ອນຫີນຊ້ອນທັບກັນໄວ້ພາຍໃນເຈົ້າ ເພາະເຈົ້າບໍ່ໄດ້ຮູ້ເວລາຂອງການຊົງຢ້ຽມຢາມເຈົ້າ" (ລູກາ 19:43, 44)

**ພະເຍຊູໄດ້ກ່າວແນວໃດທີ່ບົ່ງບອກເຖິງຄວາມສົງສານຂອງພະອົງທີ່ມີຕໍ່ເມືອງທີ່ບໍ່ຮູ້ຈັກສຳນຶກຜິດ?**

> "ໂອ ເຢຣູຊາເລັມ ເຢຣູຊາເລັມເອີຍ, ເຈົ້າທີ່ໄດ້ຂ້າບັນດາຜູ້ປະກາດພຣະທັມ ແລະເອົາຫີນຄວ່າງໃສ່ພວກທີ່ຮັບໃຊ້ມາຫາເຈົ້າ, ເຮົາປາຖນາຈັກເທື່ອແລ້ວໜໍ ວ່າຈະຮວບຮວມເອົາລູກຂອງເຈົ້າໄວ້ເໝືອນດັ່ງແມ່ໄກ່ຮວບຮວມລູກໄວ້ໃຕ້ປີກຂອງມັນແຕ່ພວກເຈົ້າບໍ່ຍິນຍອມ" ( ມັດທາຍ 23:37)

**ໃນຂະນະທີ່ພະອົງກຳລັງຈະອອກຈາກພະວິຫານ ພະອົງໄດ້ກ່າວແນວໃດ?**

> "ເບິ່ງແມ່, ເຮືອນຂອງເຈົ້າກໍຈະຖືກປະຮ້າງໄວ້ໃຫ້ຢູ່<u>ວ່າງເປົ່າ</u>ແກ່ເຈົ້າ" (ມັດທາຍ 23:38)

**ໝາຍເຫດ**: ຄົນຢິວໄດ້ເຕັມໄປດ້ວຍຄວາມອະຍຸດຕິທຳໂດຍການທີ່ພວກເຂົາປະຕິເສດແລະຄຶງພະຄຣິດທີ່ໄມ້ກາງແຂນ ແລະພວກເຂົາກໍກົດຂີ່ຂົ່ມເຫງຄົນທີ່ຕິດຕາມພະຄຣິດຫລັງຈາກພະອົງຟື້ນຂຶ້ນມາ. (ໃຫ້ເບິ່ງ ມັດທາຍ 23:29-35; ໂຢຮັນ 19:15; ກິດຈະການ 4-8)

**ເມື່ອໄດ້ຍິນດັ່ງນີ້ແລ້ວ ພວກສາວົກໄດ້ຖາມຄຳຖາມຫຍັງ?**

"ເມື່ອພຣະອົງປະທັບຢູ່ພູຫມາກກອກເທດ ພວກສາວົກມາເຝົ້າພຣະອົງຕ່າງຫາກກາບທູນວ່າ, 'ຂໍໂຜດໃຫ້ພວກຂ້າພຣະອົງຊາບແດ່ວ່າ ເຫດການເຫລົ່ານີ້ຈະເກີດຂຶ້ນເວລາໃດ ສິ່ງໃດເປັນຫມາຍສຳຄັນວ່າ ທ່ານຈະມາແລະສະໄຫມເກົ່າຈະສິ້ນສຸດລົງ'" (ມັດທາຍ 24:3)

**ໝາຍເຫດ**: ການລົບລ້າງອຳນາດຂອງເຢຣູຊາເລັມແລະຂອງຊົນຊາດຢິວແມ່ນເປັນການລົ້ມສະຫລາຍປະເພດໜຶ່ງຂອງທຸກໆເມືອງແລະຂອງທຸກໆຊາດໃນໂລກ. ຫລາຍອາດຈຳແນກບໍ່ໄດ້ເຖິງຄວາມແຕກຕ່າງຂອງສອງເຫດການນີ້. ຄຳທຳນາຍຂອງພະເຍຊູແມ່ນໝາຍເຖິງຫລາຍການລົ້ມສະຫລາຍຂອງກຸງເຢຣູຊາເລັມ ຄຳພະຍາກອນນີ້ໄດ້ໝາຍເຖິງການທຳລາຍລ້າງບາບໃນໂລກດ້ວຍໄຟ ຄຳທຳນາຍນີ້ບໍ່ແມ່ນສຳລັບສາວົກຂອງພະອົງໃນຍຸກທຳອິດເທົ່ານັ້ນ ແຕ່ຍັງສຳລັບຄົນທັງ-ຫລາຍທີ່ອາໄສໃນຊ່ວງສຸດທ້າຍຂອງປະຫວັດສາດໂລກ. ພະຄຣິດໄດ້ບອກໃຫ້ຮູ້ເຖິງໝາຍສຳຄັນຂອງການລົ້ມສະ-ຫລາຍຂອງເຢຣູຊາເລັມແລະການສະເດັດມາຄັ້ງທີສອງຂອງພະອົງ.

**ພະຄຣິດໄດ້ບອກບໍ່ວ່າໜຶ່ງໃນເຫດການເຫລົ່ານີ້ແມ່ນໃກ້ເຂົ້າມາແລ້ວ?**

"ພຣະເຍຊູຊົງຕອບເຂົາວ່າ, '<u>ຈົ່ງລະວັງໃຫ້ດີ ຢ່າໃຫ້ຜູ້ໃດຫລອກລວງພວກທ່ານໃຫ້ຫລົງ</u> ດ້ວຍວ່າຈະມີຫລາຍຄົນມາອ້າງນາມຂອງເຮົາວ່າ 'ເຮົານີ້ແຫລະ, ເປັນພຣະຄຣິດ' ແລະຈະຫລອກລວງຫລາຍຄົນໃຫ້ຫລົງໄປ ພວກທ່ານຈະໄດ້ຍິນເຖິງເຣື່ອງການເສິກ ແລະຂ່າວເລົ່າລືເຖິງເຣື່ອງການເສິກສົງ-ຄາມ ຈົ່ງລະວັງ ຢ່າຕົກໃຈ <u>ດ້ວຍວ່າເຫດການເຫລົ່ານີ້ຈຳເປັນຕ້ອງເກີດຂຶ້ນ ແຕ່ວ່າທີ່ສຸດປາຍຍັງບໍ່ມາເຖິງ</u>'" (ມັດທາຍ 24:4-6)

**ພະອົງໄດ້ກ່າວແນວໃດກ່ຽວກັບສົງຄາມ, ການກັນດານອາຫານ, ໂລກລະບາດ, ແລະແຜ່ນດິນໄຫວທີ່ຈະຕ້ອງເກີດຂຶ້ນກ່ອນເຫດການເລົ່ານີ້?**

"ເຫດການທັງປວງນີ້ເປັນເຫມືອນຂັ້ນ<u>ຕົ້ນຂອງຄວາມເຈັບປວດ</u>ໃນການເກີດລູກ" (ມັດທາຍ 24:8)

**ໝາຍເຫດ**:ໄພພິບັດເຫລົ່ານີ້ຈະຕ້ອງເກີດຂຶ້ນກ່ອນການລົ້ມສະຫລາຍຂອງກຸງເຢຣູຊາເລັດແລະການສະເດັດມາຄັ້ງທີສອງ. ເໝືອນຢ່າງທີ່ໄດ້ກ່າວໄວ້ແລ້ວວ່າຄຳທຳນາຍນີ້ແມ່ນມີສອງຄວາມໝາຍ. ຄວາມໝາຍທຳອິດແມ່ນໝາຍເຖິງເຢຣູຊາເລັມແລະຊົນຊາດຢິວ, ຄວາມໝາຍທີສອງແມ່ນໝາຍເຖິງໝົດທັງໂລກ; ກຸງເຢຣູຊາເລັມລົ້ມສະຫລາຍຍ້ອນວ່າປະຊາຊົນເມືອງນັ້ນປະຕິເສດພະຄຣິດໃນຕອນທີ່ພະອົງສະເດັດມາເທື່ອທຳອິດ ການລົ້ມສະຫລາຍນີ້ແມ່ນປະເພດໜຶ່ງຂອງການລົ້ມສະຫລາຍທັງໂລກຍ້ອນປະຊາຊົນໃນໂລກປະຕິເສດພະຄຣິດບໍ່ໃສ່ໃຈໃນຄຳເຕືອນຂອງພະເຈົ້າທີ່ສັ່ງໃຫ້ພວກເຂົາຕຽມພ້ອມໃນການສະເດັດມາຄັ້ງທີສອງຂອງພະຄຣິດ.

**ຈະເກີດຫຍັງຂຶ້ນກັບຄົນຂອງພະເຈົ້າ?**

"ເມື່ອນັ້ນເຂົາຈະມອບພວກທ່ານໄວ້ໃຫ້ທົນທຸກລຳບາກແລະຂ້າທ່ານເສ ັງ ຄົນທຸກຊາດຈະກຽດຊັງພວກທ່ານເພາະເຫັນແກ່ນາມຂອງເຮົາ ຄາວນັ້ນຈະມີຫລາຍຄົນສະດຸດໃຈ ຈະທັກຫລັງກັນແລະກັນແລະຈະກຽດຊັງເຊິ່ງກັນແລະກັນ ຫມໍທຳນວາຍຂີ້ໂລບຫລາຍຄົນຈະເກີດຂຶ້ນ ແລະຈະຫລອກລວງ

ຫລາຍຄົນໃຫ້ຫລົງໄປ ຄວາມຮັກຂອງຄົນສ່ວນຫລາຍຈະເຢັນລົງ ເພາະຄວາມອະທັມແຜ່ກວ້າງອອກໄປ" (ມັດທາຍ 24:9-12)

## ແມ່ນໃຜທີ່ພະອົງກ່າວວ່າຈະໄດ້ຮັບຄວາມລອດພົ້ນ?

"ແຕ່ຜູ້ໃດອົດທົນຈົນເຖິງທີ່ສຸດ ຜູ້ນັ້ນແຫລະ, ຈະໄດ້ລອດພົ້ນ" (ມັດທາຍ 24:13)

## ພະຄຣິດໄດ້ກ່າວວ່າຈຸດຈົບຈະມາເຖິງຕອນໃດ?

"ຂ່າວປະເສີດເຣື່ອງຣາຊອານາຈັກນີ້ຈະໄດ້ປະກາດໄປທົ່ວໂລກ ເພື່ອເປັນຄຳພຍານແກ່ທຸກໆ ຊາດແລ້ວທີ່ສຸດປາຍຈະມາເຖິງ" (ມັດທາຍ 24:14)

**ໝາຍເຫດ**: ກ່ອນການລົ້ມສະຫລາຍຂອງກຸງເຢຣູຊາເລັມ ທ່ານໂປໂລໄດ້ປະກາດຂ່າວປະເສີດທີ່ເມືອງໂຣມ ຫລັງຈາກນັ້ນໄປທີ່ນະຄອນຫລວງຂອງໂລກ. ທ່ານໂປໂລໄດ້ຂຽນໄປຍັງໄພ່ພົນຂອງພະເຈົ້າທີ່ຢູ່ໃນລາດຊະວັງຂອງກາຍຊາ(ຟີລິບປອຍ 4:22) ຫລັງຈາກນັ້ນກໍໄດ້ກ່າວອີກວ່າ ຂ່າວປະເສີດໄດ້ຖືກປະກາດແກ່ມະນຸດທຸກຄົນໃນໃຕ້ຟ້າແລ້ວ (ໂກໂລຊາຍ 1:23)

ມັນຈະເປັນວັນຈົບຂອງຊົນຊາດຢິວ ແລະເປັນວັນຈົບຂອງທຸກຊົນຊາດໃນໂລກ. ເມື່ອຂ່າວປະເສີດຫລືຂ່າວດີຂອງການສະເດັດມາຂອງອານາຈັກພະຄຣິດຖືກປະກາດໄປທົ່ວແຜ່ນດິນໂລກເພື່ອໃຫ້ຊົນຊາດຕ່າງໆໄດ້ຮູ້ ຫລັງຈາກນັ້ນຈຸດຈົບກໍຈະມາເຖິງ. ເໝືອນຢ່າງທີ່ຈຸດຈົບຂອງຊາດຢິວໄດ້ມາພ້ອມກັບການລົ້ມສະຫລາຍ ຈຸດຈົບຂອງໂລກກໍຈະມາເຊັ່ນນັ້ນ.

## ອັນໃດເປັນສັນຍານບອກການລົ້ມສະຫລາຍຂອງກຸງເຢຣູຊາເລັມ?

"ເມື່ອໃດທ່ານເຫັນກອງທັບມາຕັ້ງອ້ອມຮອບກຸງເຢຣູຊາເລັມ ເມື່ອນັ້ນທ່ານຈົ່ງຮູ້ວ່າຄວາມຈິບຫາຍຂອງກຸງນັ້ນເຂົ້າມາໃກ້ແລ້ວ" (ລູກາ 21:20)

## ໃນເວລານີ້ພວກອັກຄະສາວົກຄວນໄດ້ເຮັດແນວໃດ?

"ເຫດສັນນັ້ນ ເມື່ອໃດທ່ານທັງຫລາຍເຫັນສິ່ງທີ່ຫນ້າກຽດຫນ້າຊັງ ທີ່ເຮັດໃຫ້ເກີດວິບັດຕັ້ງຢູ່ໃນສະຖານທີ່ສັກສິດ ຕາມພຣະທັມທີ່ຊົງກ່າວໄວ້ດ້ວຍດານີເອນຜູ້ປະກາດພຣະທັມນັ້ນ (ໃຫ້ຜູ້ອ່ານເຂົ້າໃຈເອົາ) ເມື່ອນັ້ນໃຫ້ຜູ້ທີ່ຢູ່ໃນແຂວງຢູດາຍປົບຫນີໄປຍັງພູ" (ມັດທາຍ 24:15, 16)

**ໝາຍເຫດ**: ໃນປີ ຄ.ສ. 66 ເມື່ອເຊສຕິອັສ (Cestius)ຍົກທັບມາຕີເມືອງເຢຣູຊາເລັມແຕ່ກໍບໍ່ສາມາດເອົາຊະນະໄດ້ເລີຍຍົກທັບຖອຍໜີ ຄຣິສຕຽນທັງຫລາຍກໍຮູ້ດີວ່ານີ້ເປັນສັນຍານທີ່ພະຄຣິດໄດ້ກ່າວໄວ້ໃນຄຳເຕືອນຂອງພະອົງ ແລະຄຣິສຕຽນເຫລົ່ານີ້ກໍຫລົບໜີອອກໄປ(ອ້າງອີງຈາກ Eusebius, *Church History*, Book 3, chap, 5) ໃນປີ ຄ.ສ. 70 ຄົນຢິວ 1,100,000 ຄົນ ຖືກຂ້າຕາຍຈາກການບຸກໂຈມຕີຂອງສັດຕູ. ນີ້ເປັນບົດຮຽນທີ່ສຳຄັນຈາກການສຶກສາຄຳພະຍາກອນ ແລະໃຫ້ຄວາມສົນໃຈແກ່ສັນຍານເຕືອນ. ຄົນທີ່ເຊື່ອໃນພະຄຣິດແລະເຝົ້າລະວັງຕໍ່ສັນຍານທີ່ພະອົງໄດ້ກ່າວໄວ້ກໍໄດ້ຮັບຄວາມປອດໄພ ແຕ່ຄົນທີ່ບໍ່ເຊື່ອນັ້ນກໍໄດ້ພິນາດໄປ. ເພາະສະນັ້ນໃນວັນສຸດທ້າຍຂອງໂລກ ຄົນທີ່ເຝົ້າລະວັງແລະຄົນທີ່ເຊື່ອໃນພະຄຣິດແລະຄຳເຕືອນຂອງພະອົງຈະໄດ້ຮັບການລອດພົ້ນ ແລະຄົນທີ່ບໍ່ລະມັດລະວັງແລະບໍ່ເຊື່ອຈະຖືກທຳລາຍໄປ. (ເບິ່ງ ມັດທາຍ 24:36-44; ລູກາ 21:34-36; 1 ເທຊະໂລນິກ 5:1-6)

## ເມື່ອສັນຍານເຕືອນປາກົດແລ້ວ ພວກເຂົາຄວນໜີຮີບດ່ວນປານໃດ?

“ຜູ້ທີ່ຢູ່ເທິງຫລັງຄາເຮືອນ ຢ່າໃຫ້ລົງມາເກັບເອົາສິ່ງຂອງທີ່ຢູ່ໃນເຮືອນຂອງຕົນອອກໄປ ສ່ວນຜູ້ທີ່ຢູ່ຕາມທົ່ງນາກໍຢ່າຕ່າວຄືນມາເອົາເສື້ອຜ້າຂອງຕົນ” (ມັດທາຍ 24:17, 18)

ພະຄຣິດໄດ້ກ່າວແນວໃດຕໍ່ໄປເພື່ອບອກໃຫ້ຮູ້ວ່າພະອົງເປັນຫ່ວງຕໍ່ສາວົກຂອງພະອົງ?

“ຈົ່ງອ້ອນວອນຂໍ ເພື່ອການທີ່ທ່ານຕ້ອງຫນີນັ້ນຈະບໍ່ຕົກໃນລະດູຫນາວຫລືໃນວັນສະບາໂຕ”( ມັດທາຍ 24:20)

**ໝາຍເຫດ**: ການຫລົບໜີໃນລະດູໜາວແມ່ນເຕັມໄປດ້ວຍຄວາມຫຍຸ້ງຍາກລຳບາກ ບໍ່ຕ້ອງສົງໄສເລີຍ ການພະຍາຍາມຫລົບໜີໃນວັນສະບາໂຕແມ່ນຫຍຸ້ງຍາກລຳບາກຫລາຍ. ພະເຈົ້າຊົງໄດ້ຍິນຄຳອະທິຖານຂອງຄົນທີ່ຕິດຕາມພະຄຣິດ ແລະກໍບໍ່ມີຄົນໃດບໍ່ວ່າຈະເປັນຢິວຫລືໂຣມມັນສາດກີດກັ້ນພວກເຂົາຈາກການຫລົບໜີໄດ້. ໃນຕອນທີ່ ເຊສຕິອັສ (Cestius)ຖອຍກັບ ຄົນຢິວໄດ້ໄລ່ຕາມກອງທັບລາວໄປ, ສະນັ້ນຄົນຄຣິສຕຽນໄດ້ມີໂອກາດອອກຈາກເມືອງ. ຫົນທາງກໍໂລ່ງສຳລັບພວກເຂົາ ເພາະບໍ່ມີສັດຕູ ແລະພວກຄົນຢິວກໍໄດ້ໄປເຕົ້າໂຮມທີ່ເຢຣູຊາເລັມເພື່ອງານສະເຫລີມສະຫລອງພະວິຫານ(Feast of Tabernacle). ສະນັ້ນຄຣິສຕຽນແຫ່ງຢູເດຍສາມາດຫລົບໜີໄດ້ໂດຍບໍ່ມີອັນຕະລາຍຫຍັງໃນລະດູໃບໄມ້ລົ່ນເຊິ່ງເປັນລະດູທີ່ເໝາະສົມແກ່ການຫລົບໜີ.

## ພະຄຣິດໄດ້ທຳນາຍວ່າຈະເກີດເຫດການຮ້າຍອັນໃດ?

ດ້ວຍວ່າໃນຄາວນັ້ນຈະມີຄວາມທຸກລຳບາກອັນໃຫຍ່ຫລວງຢ່າງບໍ່ເຄີຍເກີດມີມາຕັ້ງແຕ່ຕົ້ນເດີມໂລກຈົນເຖິງບັດນີ້ ແລະເມື່ອຫນ້າຈະບໍ່ມີຕໍ່ໄປອີກຈັກເທື່ອ (ມັດທາຍ 24:21)

ໝາຍເຫດ: ຄຳພະຍາກອນຂອງໂມເຊ(ພະບັນຍັດທີສອງ 28:47-53)ໄດ້ເປັນຈິງໃນຕອນທີ່ເຢຣູຊາເລັມຖືກລ້ອມ. “ທ່ານຈະຕ້ອງຮັບປະທານເຊື້ອສາຍແຫ່ງຮ່າງກາຍຂອງທ່ານເປັນອາຫານ ຄືເນື້ອລູກຊາຍແລະລູກຍິງຂອງທ່ານ ຜູ້ຊຶ່ງພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານປະທານແກ່ທ່ານ ໃນການລ້ອມແລະໃນຄວາມທຸກລຳບາກຊຶ່ງສັດຕຣູຂອງທ່ານມາທຳໃຫ້ທ່ານທັງຫລາຍທຸກລຳບາກນັ້ນ” ໃຫ້ສຶກສາເພີ່ມເຕີມໃນ Josephus, *Wars of the Jews*, book 6, chap 3, par. 4. ກ່ຽວກັບຄວາມເປັນຈິງຂອງຄຳພະຍາກອນ

ເມື່ອເຢຣູຊາເລັມລົ້ມສະຫລາຍ ຈັກກະພັດຜູ້ນອກລີດກໍໄດ້ກົດຂີ່ຂົ່ມເຫງຄຣິສຕຽນໃນຊ່ວງລະຫວ່າງສາມສັດຕະວັດທຳອິດຂອງຄຣິສຕຽນ. ຫລັງຈາກນັ້ນຄຣິສຕຽນກໍຖືກກົດຂີ່ຂົ່ມເຫງຮ້າຍແຮງກວ່າເກົ່າເປັນເວລາຫລາຍສັດຕະວັດເຊິ່ງເປັນຊ່ວງເວລາທີ່ສັນຕະປາປາມີອຳນາດສູງສຸດ ເຊິ່ງເຫດການເຫລົ່ານີ້ກໍໄດ້ຖືກພະຍາກອນໄວ້ໃນ ດານີເອນ 7:25 ແລະພະນິມິດ 12:6. ຄວາມລຳບານຍາກແຄ້ນນີ້ເກີດຂຶ້ນພາບໃຕ້ການປົກຄອງຂອງຄົນນອກລີດແລະໂຣມມັນ.

## ວັນເວລາໄດ້ຖືກສັ້ນເຂົ້າເພື່ອໃຜ?

“ແລະຖ້າວັນທັງຫລາຍນັ້ນບໍ່ໄດ້ຊົງບັນດານໃຫ້ສັ້ນເຂົ້າ ຈະບໍ່ມີມະນຸດຄົນໃດລອດພົ້ນໄດ້ ແຕ່ເພາະເຫັນແກ່ພວກທີ່ຊົງເລືອກໄວ້ນັ້ນ ວັນເຫລົ່ານັ້ນຈຶ່ງໄດ້ຊົງບັນດານໃຫ້ສັ້ນເຂົ້າ” (ມັດທາຍ 24:22)

ໝາຍເຫດ:

**ພະຄຣິດໄດ້ເຕືອນໃຫ້ເຮົາຮູ້ວ່າຈະມີການຫລອກລວງອັນໃດ?**

"ໃນເວລານັ້ນຖ້າຜູ້ໃດຈະບອກພວກທ່ານວ່າ 'ເບິ່ງແມ໋, ອົງພຣະຄຣິດຢູ່ທີ່ນີ້' ຫລື 'ຢູ່ທີ່ນັ້ນ' ຢ່າຊູ່ເຊື່ອ ດ້ວຍວ່າຈະມີພຣະຄຣິດທຽມ ແລະຫມໍທຳນວາຍຂີ້ໂລບຫລາຍຄົນເກີດຂຶ້ນ ສະແດງຫມາຍສຳຄັນອັນໃຫຍ່ແລະການອັດສະຈັນຕ່າງໆ ເພື່ອຖ້າເປັນໄດ້ ຈະຫລອກລວງຜູ້ທີ່ພຣະເຈົ້າຊົງເລືອກໄວ້ໃຫ້ຫລົງ" (ມັດທາຍ 24:23, 24)

## ໝາຍສຳຄັນທີ່ເກີດຂຶ້ນກັບຕາເວັນ ດວງເດືອນ ແລະດາວ

**ໝາຍສຳຄັນທີ່ບອກເຖິງວັນສຸດທ້າຍໃດຈະເກີດຂຶ້ນກັບຟ້າສະຫວັນ?**

"<u>ຈະມີຫມາຍສຳຄັນໃນດວງອາທິດ ໃນດວງຈັນ ແລະໃນດວງດາວທັງປວງ ແລະຈະມີຄວາມທຸກຮ້ອນເທິງແຜ່ນດິນໂລກຕາມປະເທດຕ່າງໆຊຶ່ງມີຄວາມ ສງົບສົນເທເພາະສຽງກ້ອງອັນໃຫຍ່ຫລວງຂອງທະເລແລະຟອງນ້ຳ</u>" (ລູກາ 21:25)

**ໝາຍສຳຄັນເລົ່ານີ້ຈະເກີດຂຶ້ນຕອນໃດ?**

"ພໍຫມົດຄວາມທຸກລຳບາກຂອງວັນເຫລົ່ານັ້ນແລ້ວ, "ດວງອາທິດຈະມືດໄປ ແລະດວງຈັນຈະບໍ່ສ່ອງແສງ ດວງດາວທັງປວງຈະຕົກລົງຈາກຟ້າ ແລະບັນດາສິ່ງທີ່ມີອຳນາດໃນທ້ອງຟ້າຈະສະທ້ານຫວັ່ນ-ໄຫວ" (ມັດທາຍ 24:29)

"ໃນວັນເຫລົ່ານັ້ນເມື່ອຄາວທຸກຍາກລຳບາກຜ່ານພົ້ນໄປແລ້ວ ດວງອາທິດຈະມືດໄປ ແລະດວງຈັນຈະບໍ່ສ່ອງແສງ ດວງດາວທັງປວງຈະຕົກລົງຈາກຟ້າ ແລະບັນດາສິ່ງທີ່ມີອຳນາດໃນທ້ອງຟ້າຈະສະ-ທ້ານຫວັ່ນໄຫວ" (ມາຣະໂກ 13:24, 25)

ໝາຍເຫດ:

## ສະພາບການຂອງໂລກ, ການຕຽມຕົວ

**ຈະເກີດມີໝາຍສຳຄັນອັນໃດທີ່ບອກເຖິງການສະເດັດມາຂອງພະຄຣິດ?**

"ຈະມີຫມາຍສຳຄັນໃນດວງອາທິດ ໃນດວງຈັນ ແລະໃນດວງດາວທັງປວງ ແລະຈະມີຄວາມທຸກຮ້ອນເທິງແຜ່ນດິນໂລກຕາມປະເທດຕ່າງໆຊຶ່ງມີຄວາມ ສງົບສົນເທເພາະສຽງກ້ອງອັນໃຫຍ່ຫລວງຂອງທະເລແລະຟອງນ້ຳ ມະນຸດຈະສລົບລືມຄືງໄປເພາະຄວາມຢ້ານ ເພາະການຄອຍຖ້າເບິ່ງເຫດ-ການທັງຫລາຍທີ່ຈະເກີດຂຶ້ນໃນໂລກ ດ້ວຍວ່າ "ບັນດາສິ່ງທີ່ມີອຳນາດໃນທ້ອງຟ້າຈະສະທ້ານຫວັ່ນ-ໄຫວ" (ລູກາ 21:25, 26)

**ເຫດການອັນສຳຄັນໃດທີ່ຈະເກີດຂຶ້ນຕໍ່ໄປ?**

“ເມື່ອນັ້ນເຂົາຈະເຫັນບຸດມະນຸດສະເດັດມາໃນເມກ ດ້ວຍຣິດທານຸພາບ ແລະສະງ່າຣາສີອັນຍິ່ງໃຫຍ່” ( ລູກາ 21:27) (ໃຫ້ເບິ່ງ ມັດທາຍ 24:30)

### ເມື່ອເຫດການເຫລົ່ານີ້ເລີ່ມຈະເກີດຂຶ້ນ, ພວກເຮົາຄວນເຮັດແນວໃດ?

“ເມື່ອເຫດການເຫລົ່ານີ້ຕັ້ງຕົ້ນບັງເກີດຂຶ້ນນັ້ນ ທ່ານທັງຫລາຍຈົ່ງຍືດຕົວແລະເງີຍຫນ້າຂຶ້ນ ດ້ວຍວ່າ-ການຊົງໄຖ່ທ່ານໃຫ້ພົ້ນກໍໃກ້ຈະເຖິງແລ້ວ” (ລູກາ 21:28)

### ເມື່ອຕົ້ນໄມ້ເລີ່ມປົ່ງໃບ ພວກເຮົາຄວນຮູ້ເຖິງຫຍັງ?

“ຈົ່ງຮຽນຄຳອຸປມາຈາກຕົ້ນເດື່ອເທດ ເມື່ອກິ່ງກ້ານມັນແຕກໃບອ່ອນອອກພວກທ່ານກໍຮູ້ວ່າຣະດູຮ້ອນໃກ້ຈະເຖິງແລ້ວ” ( ມັດທາຍ 24:32)

**ໝາຍເຫດ**: ຢູ່ປະເທດລາວເຮົາ ເບິ່ງຄືວ່າ ອາກາດຮ້ອນເກືອບຕະຫລອດປີ ໃບໄມ້ລົ່ນ ໃບໄມ້ປົ່ງເກືອບຕະຫລອດປີ ພໍໃກ້ເຂົ້າລະດູໜາວ ໃບໄມ້ກໍລົ່ນຢູ່ແຕ່ກໍລົ່ນບໍ່ໝົດກົກ ຢູ່ປະເທດເຂດອາກາດໜາວ ພໍຮອດລະດູໃບໄມ້ລົ່ນຫລືເລີ່ມເຂົ້າລະດູໜາວ ໃບໄມ້ຢູ່ຕາມກົກໄມ້ຕ່າງໆຈະລົ່ນຈົນໝົດກົກ ໃນຊ່ວງລະດູໜາວ ເບິ່ງຄືວ່າຕົ້ນໄມ້ຕ່າງໆມັນຕາຍຈົນເພາະອາ-ກາດໜາວຫລາຍ ແລະກໍບໍ່ມີໃບໄມ້ຕິດຢູ່ກັບຕົ້ນໄມ້ເລີຍ ແລະພໍເມື່ອອາກາດເລີ່ມອຸ່ນຂຶ້ນມາໜ້ອຍໜຶ່ງ ໃບໄມ້ກໍເລີ່ມປົ່ງອອກມາ ແລະບໍ່ດົນຫລັງຈາກນັ້ນລະດູຮ້ອນກໍມາເຖິງ.

### ເມື່ອໝາຍສຳຄັນເຫລົ່ານີ້ເກີດຂຶ້ນພວກເຮົາຄວນຮູ້ວ່າແມ່ນຫຍັງຈະເກີດຂຶ້ນຕາມມາ?

“ຢ່າງນັ້ນແຫລະ, ພວກທ່ານກໍເຫມືອນກັນ ເມື່ອເຫັນເຫດການເຫລົ່ານັ້ນກຳລັງເກີດຂຶ້ນ ຈົ່ງຮູ້ວ່າຣາຊອານາຈັກຂອງພຣະເຈົ້າໃກ້ຈະເຖິງແລ້ວ” (ລູກາ 21:31)

### ພະຄຣິດໄດ້ກ່າວແນວໃດເຖິງຄວາມແນ່ນອນຂອງຄຳພະຍາກອນ?

“ເຮົາບອກພວກທ່ານຕາມຄວາມຈິງວ່າ ຄົນໃນສະໄຫມນີ້ຈະບໍ່ລ່ວງຫລັບໄປກ່ອນເຫດການທັງປວງນີ້ບັງເກີດຂຶ້ນ ຟ້າແລະດິນກໍຈະລ່ວງພົ້ນໄປ ແຕ່ຖ້ອຍຄຳຂອງເຮົາຈະບໍ່ລ່ວງພົ້ນໄປຈັກເທື່ອ”( ມັດທາຍ 24:34, 35)

**ໝາຍເຫດ**: ເໝືອນຢ່າງທີ່ຄຳພະຍາກອນຂອງພະຄຣິດກ່ຽວກັບການລົ້ມສະຫລາຍຂອງກຸງເຢຣູຊາເລັມໄດ້ເປັນຈິງ, ພວກເຮົາກໍຄວນແນ່ໃຈໄດ້ວ່າຄຳພະຍາກອນກ່ຽວກັບວັນສຸດທ້າຍຂອງໂລກກໍຕ້ອງກາຍເປັນຈິງແທ້.

### ໃຜຜູ້ດຽວທີ່ຮູ້ວັນເວລາຂອງການສະເດັດມາຂອງພະຄຣິດ?

“ແຕ່ເຣື່ອງວັນແລະໂມງນັ້ນບໍ່ມີໃຜຮູ້ ແມ່ນເທວະດາໃນສວັນຫລືພຣະບຸດກໍບໍ່ຮູ້ ຮູ້ແຕ່ພຣະບິດາອົງດຽວ” (ມັດທາຍ 24:36)

### ພວກເຮົາຄວນຮຽນຮູ້ເຖິງການສະເດັດມາຄັ້ງທີສອງຂອງພະຄຣິດຈາກບົດຮຽນອັນໃດ?

“ດ້ວຍວ່າສະໄຫມຂອງໂນເອໄດ້ເປັນຢ່າງໃດ ເມື່ອບຸດມະນຸດສະເດັດມາກໍຈະເປັນຢ່າງນັ້ນ ເພາະວ່າເມື່ອກ່ອນວັນນ້ຳຖ້ວມນັ້ນ ຄົນທັງຫລາຍໄດ້ກິນແລະດື່ມ ໄດ້ແຕ່ງງານແລະຍົກໃຫ້ເປັນຜົວເມັຽກັນ

ຈົນເຖິງວັນທີ່ໂນເອໄດ້ເຂົ້າໄປໃນນາວາ ແລະນໍ້າໄດ້ມາຖ້ວມກວາດເຂົາໄປໂດຍບໍ່ທັນຮູ້ຕົວຢ່າງໃດ ເມື່ອບຸດມະນຸດສະເດັດມາກໍຈະເປັນຢ່າງນັ້ນ” (ມັດທາຍ 24:37-39)

**ພະຄຣິດໄດ້ເຕືອນເຮົາວ່າແນວໃດກ່ຽວກັບວັນເວລາຂອງການສະເດັດມາຂອງພະອົງ?**

“ເຫດສັນນັ້ນພວກທ່ານກໍເຫມືອນກັນ ຈົ່ງຕຽມຕົວໄວ້ໃຫ້ພ້ອມ ເພາະໃນໂມງທີ່ພວກທ່ານບໍ່ທັນຄຶດນັ້ນ ບຸດມະນຸດຈະສະເດັດມາ” (ມັດທາຍ 24:44)

**ຈະເກີດຫຍັງຂຶ້ນກັບຄົນທີ່ຄຶດໃນໃຈວ່າພະເຈົ້າບໍ່ສະເດັດມາໃນໄວໆ?**

“ແຕ່ຖ້າຂ້າໃຊ້ຜູ້ນັ້ນຊົ່ວແລະຄຶດວ່າ ‘ນາຍຂອງເຮົາມາຊັກຊ້າດອກ’ ແລ້ວຈຶ່ງຕັ້ງຕົນທຸບຕີເພື່ອນຂ້າໃຊ້ດ້ວຍກັນ ທັງກິນແລະດື່ມນຳຄົນຂີ້ເຫລົ້າ ນາຍຂອງຂ້າໃຊ້ຜູ້ນັ້ນຈະມາໃນວັນທີ່ມັນບໍ່ຄຶດ ແລະໃນໂມງທີ່ມັນບໍ່ຮູ້ ແລະຈະຜ່າມັນໃຫ້ເປັນສອງຕ່ອນ ທັງຈະໃຫ້ເຂົ້າສ່ວນກັບຄົນຫນ້າຊື່ໃຈຄົດ ບ່ອນນັ້ນຈະມີການຮ້ອງໄຫ້ແລະຂົບແຂ້ວຢູ່” (ມັດທາຍ 24:48-51)